ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----====0000====----

ກະຊວງອຸດສາຫະກຳ ແລະການຄ້າ

ເລກທີ...1374.../ອຄ.

ນະຄອນຫລວງວຽງຈັນ, ວັນທີ.19..ກໍລະກົດ 2010.

# <u>ຄຳສັ່ງ</u>

ເຖິງ : ທົ່ວໜ້າພະແນກອຸດສາຫະກຳ ແລະການຄ້າບັນດາແຂວງ ແລະນະຄອນຫຼວງໃນທົ່ວປະເທດ.

ເລື່ອງ : ການເພີ່ມທະວີຄວາມເອົາໃຈໃສ່ ຕໍ່ການຄຸ້ມຄອງສິນຄ້າສະບຽງອາຫານປະເພດເຂົ້າກິນ ຢູ່ພາຍໃນປະເທດ.

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 188/ນຍ, ລົງວັນທີ 17/08/2006, ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ;

- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 19/ນຍ, ລົງວັນທີ 09/07/2010 ກ່ຽວກັບການດຳເນີນມາດຕະການສຳຄັນຈຳນວນໜຶ່ງ ເພື່ອແກ້ໄຂຜົນຮ້າຍຈາກໄພແລ້ງ ແລະປ້ອງກັນນ້ຳຖ້ວມ;

- ອີງໃສ່ຄວາມຮຽກຮ້ອງຕ້ອງການຂອງສະພາບການຕົວຈິງ;

ເພື່ອຜັນຂະຫຍາຍເນື້ອໃນຂອງຄຳສັ່ງສະບັບເລກທີ 19/ນຍ, ລົງວັນທີ 09/07/2010 ດັ່ງກ່າວໃຫ້ມີປະສິດທິຜົນ, ແນໃສ່ປ້ອງກັນຜົນຮ້າຍທີ່ອາດຈະເກີດຂຶ້ນ ຈາກໄພແຫ້ງແລ້ງ ແລະນ້ຳຖ້ວມ ຄືດັ່ງທີ່ກຳລັງຄຸກຄາມຢູ່ປະເທດເພື່ອນບ້ານ ແລະ ຢູ່ໃນໂລກ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະການຄ້າອອກຄຳສັ່ງ ດັ່ງນີ້ :

1- ໃຫ້ກົມການຄ້າພາຍໃນ ແລະ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ລົງເກັບກຳຕົວເລກເຂົ້າກິນທີ່ມີຢູ່ພາຍໃນແຂວງຂອງຕົນ ປະຈຸບັນໃນນັ້ນ ລວມທັງເຂົ້າເປືອກ ແລະ ເຂົ້າສານທຸກຊະນິດມີຫຼາຍປານໃດ ແລະ ໃຫ້ສົມທຽບໃສ່ແຜນດູນດ່ຽງເຂົ້າກິນປະຈຳປີ ມີເຫຼືອ/ບໍ່ພໍ ແນວໃດ ພ້ອມທັງໃຫ້ມີວິທີການຄຸ້ມຄອງດັດສົມລະອຽດ.

2- ໃຫ້ຕິດຕາມສະພາບການຜະລິດ ການຊື້-ຂາຍ ແລະ ລາຄາເຂົ້າທຸກຊະນິດຢ່າງລະອຽດໃນແຕ່ລະອາທິດ (ທັງຈາກຊາວນາ ແລະ ຢູ່ຕະຫຼາດທົ່ວໄປ), ເພື່ອລາຍງານກະຊວງອຸດສາຫະກຳ ແລະ ການຄ້າຢ່າງເປັນ ປົກກະຕິ.

3- ໃຫ້ສົມທົບກັບຂະແໜງການກ່ຽວຂ້ອງ ເປັນຕົ້ນ ຂະແໜງກະສິກຳ-ປ່າໄມ້, ເພື່ອຄົ້ນຄວ້າໂຄງສ້າງລາຄາ ຂອງຕົ້ນທຶນການຜະລິດເຂົ້າຢູ່ແຕ່ລະທ້ອງຖິ່ນ ເພື່ອຄວາມເປັນເອກະພາບ ແລະເປັນບ່ອນອີງໃນການກຳນົດລາຄາ ຊື້-ຂາຍ ທີ່ຮັບປະກັນໃຫ້ 03 ຜົນປະໂຫຍດ ເຊັ່ນ: ຜູ້ຜະລິດ, ຜູ້ຊົມໃຊ້ ແລະຜົນປະໂຫຍດຂອງລັດຢ່າງເໝາະສົມ.

4- ໃຫ້ສົມທົບກັບຂະແໜງການກ່ຽວຂ້ອງ (ກະສິກຳ-ປ່າໄມ້), ເພື່ອຄົ້ນຄວ້ານຳໃຊ້ແນວພັນ ແລະ ປຸ໋ຍທີ່ດີເຂົ້າໃນການຜະລິດເຂົ້າ ເພື່ອເພີ່ມຄຸນນະພາບ, ສະມັດຕະພາບຂອງການຜະລິດເຂົ້າລາວ, ພ້ອມນັ້ນກໍໃຫ້ຄຸ້ມຄອງລາຄາປຸ໋ຍ, ທົ່ວອາຫານສັດ ແລະ ອຸປະກອນຮັບໃຊ້ການຜະລິດຢ່າງສົມເຫດສົມຜົນ.

5- ໃຫ້ປະສານສົມທົບກັບ ຂະແໜງກະສິກຳ ແລະ ປ່າໄມ້ ເພື່ອຄົ້ນຄວ້າ ລະດົມໃຫ້ປະຊາຊົນປູກພືດທົດແທນ ເພື່ອສ້າງລາຍໄດ້ໃຫ້ປະຊາຊົນ ໂດຍພະແນກອຸດສາຫະກຳ ແລະ ການຄ້າ ເຮັດບົດບາດດ້ານການຕະຫລາດ.

6- ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ສຶກສາ, ຄົ້ນຄວ້າ ແລະ ປຽບທຽບລາຄາ ເຂົ້າພາຍໃນແລະ ຕ່າງປະເທດ ໂດຍສະເພາະແຂວງ ທີ່ຕ້ອງການເຂົ້າຫລາຍ ແລະ ຖ້າມີຄວາມຈຳເປັນນຳເຂົ້າເພື່ອມາດັດສົມລາຄາພາຍໃນໃຫ້ລາຍງານກະຊວງດ່ວນ.

7- ໃຫ້ສົມທົບກັບອຳນາດການປົກຄອງທ້ອງຖິ່ນຂັ້ນແຂວງ ແລະ ເມືອງ ເພື່ອລະດົມການສ້າງຄັງແຮເຂົ້າຂອງປະຊາຊົນ.

8- ຫ້າມເດັດຂາດ ບໍ່ໃຫ້ຊາວຕ່າງປະເທດເຂົ້າມາເລາະເກັບຊື້ເຂົ້າໂດຍກົງຈາກຊາວກະສິກອນ ຄືໃນໄລຍະທີ່ຜ່ານມາ, ຊຶ່ງເປັນສາເຫດເຮັດໃຫ້ບໍ່ມີຄວາມສະຫງົບ ແລະຂາດຄວາມເປັນລະບຽບຮຽບຮ້ອຍ ຢູ່ໃນສັງຄົມ ຍ້ອນມີການປັ່ນປ່ວນແກ້ງແຍ້ງລາຄາເກັບຊື້ ແລະສຸດທ້າຍເຮັດໃຫ້ລາຄາເຂົ້າສູງຂຶ້ນ ຢ່າງບໍ່ສົມເຫດສົມຜົນ; ຖ້າພົບເຫັນກໍລະນີດັ່ງກ່າວ ແມ່ນໃຫ້ນຳໃຊ້ມາດຕະການຢ່າງເຂັ້ມງວດ.

9- ໃຫ້ກວດກາເບິ່ງບຸກຄົນໃດທີ່ເປັນຄົນລາວ ຫຼືຖືສັນຊາດລາວ ແລ້ວເອົາໃບທະບຽນວິສາຫະກິດຂອງຕົນໃຫ້ຄົນຕ່າງປະເທດເອົາໄປເຄື່ອນໄຫວໃນການເກັບຊື້ເຂົ້າ; ຖ້າສືບຮູ້ ແລະພົບເຫັນ ໃຫ້ນຳໃຊ້ມາດຕະການ ຕາມກົດໝາຍວ່າດ້ວຍວິສາຫະກິດຢ່າງເຂັ້ມງວດ.

10- ຫ້າມສົ່ງເຂົ້າອອກຂາຍຕ່າງປະເທດຢ່າງເດັດຂາດ ບໍ່ວ່າຈະດ້ວຍຮູບການໃດ ຈົນກວ່າຈະສິ້ນສຸດລະດູການຜະລິດນາປີ ຫຼືຈົນກວ່າຈະມີຄຳສັ່ງຍົກເລີກຄຳສັ່ງສະບັບນີ້, ທັງນີ້ເພື່ອຮັບປະກັນໃຫ້ມີເຂົ້າພຽງພໍຢູ່ພາຍໃນແຂວງ; ຖ້າຢູ່ແຂວງໃດ ຫາກໄດ້ມີການເຊັນສັນຍາຊື້-ຂາຍ ແລະສົ່ງອອກເຂົ້າກັບບໍລິສັດຕ່າງປະເທດໃຫ້ລາຍງານຈຳນວນລະອຽດ ເຖິງກະຊວງອຸດສາຫະກຳແລະການຄ້າດ່ວນ, _**ຊ້າສຸດບໍ່ກາຍວັນທີ 23/7/2010**_.

11- ໃຫ້ລາຍງານ ແລະຂໍທິດຊີ້ນຳຈາກເຈົ້າແຂວງ ກ່ຽວກັບວິທີການ ແລະ ການຈັດຕັ້ງປະຕິບັດຕົວຈິງທີ່ເໝາະສົມໃນທ້ອງຖິ່ນຂອງຕົນໃນແຕ່ລະໄລຍະ.

12- ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ນັບທັງສູນກາງ ແລະ ທ້ອງຖິ່ນພ້ອມກັນຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.

13- ໃຫ້ປະຕິບັດລະບົບການລາຍງານ ກ່ຽວກັບຈັດຕັ້ງປະຕິບັດວຽກງານດັ່ງກ່າວເຖິງ ກະຊວງອຸດສາຫະກຳ ແລະ ການຄ້າ (ກົມການຄ້າພາຍໃນ) ຢ່າງເປັນປົກກະຕິ ແລະ ທັນເວລາ.

14- ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ; ບັນດາຄຳສັ່ງ, ລະບຽບການ ແລະແຈ້ງການທີ່ອອກໃນເມື່ອກ່ອນ ທີ່ຂັດກັບຄຳສັ່ງສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ນຽວລະຫວາດ **ສະແຫວງສຶກສາ**

<u>ບ່ອນນຳສົ່ງ</u> :

- ຫ້ອງວ່າການສູນກາງພັກ 01 ສະບັບ "ເພື່ອລາຍງານ"
- ຄະນະເລຂາທິການລັດຖະບານ 01 ສ/ບ "
- ກະຊວງກະສິກຳ ແລະ ປ່າໄມ້ 01 ສະບັບ " ເພື່ອຊາບ ແລະ ຮ່ວມມືປະຕິບັດ "
- ກະຊວງການເງິນ (ກົມພາສີ) 01 ສະບັບ " ເພື່ອຊາບ ແລະ ຮ່ວມມືປະຕິບັດ "
-ບັນດາທ່ານເຈົ້າແຂວງທົ່ວປະເທດ, ເຈົ້າຄອນນະຄອນຫລວງ
 " ເພື່ອຊາບ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດ "
- ຄະນະນຳກະຊວງອຸດສາຫະກຳແລະການຄ້າ 03 ສ/ບ " ເພື່ອຊາບ "
- ຫ້ອງການ ແລະບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງກະຊວງ ອຄ" ເພື່ອຊາບ ແລະຕິດຕາມ "